ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

---

<u>ສຳນັກງານນາຍົກລັດຖະມົນຕີ</u>

ເລກທີ່.....42...../ນຍ
ນະຄອນຫລວງວຽງຈັນ, ວັນທີ.....20.04-2004

## ດຳລັດ
## ວ່າດ້ວຍການສົ່ງເສີມ ແລະ ພັດທະນາວິສາຫະກິດຂະໜາດນ້ອຍ ແລະ ກາງ

---

- ອີງຕາມກົດໝາຍວ່າດ້ວຍລັດຖະບານ ແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະບັບເລກທີ່ 02/ສພຊ, ລົງວັນທີ່ 6/5/2003.
- ອີງຕາມກົດໝາຍວ່າດ້ວຍທຸລະກິດ ສະບັບເລກທີ 03/ 94, ລົງວັນທີ 18/7/94.
- ອີງຕາມການສະເໜີຂອງລັດຖະມົນຕີວ່າການກະຊວງ ອຸດສາຫະກຳ ແລະ ຫັດຖະກຳ ສະບັບເລກທີ 149/ອຫ, ລົງວັນທີ 12/3/2004.

## ນາຍົກລັດຖະມົນຕີ ອອກດຳລັດ
## ໝວດທີ່ I
## ບົດບັນຍັດທົ່ວໄປ

**ມາດຕາ 1: ຈຸດປະສົງ**

ດຳລັດສະບັບນີ້ ກຳນົດທິດທາງ ຫລື ນະໂຍບາຍ, ກອງທຶນ ແລະ ອົງການຈັດຕັ້ງ ນັບທັງລະບຽບການ, ວິທີການ ແລະ ມາດຕະການ ໃນການສົ່ງເສີມ ແລະ ພັດທະນາ ວິສາຫະກິດຂະໜາດນ້ອຍ ແລະ ກາງ ໃຫ້ມີການຂະຫຍາຍຕົວຢ່າງຕໍ່ເນື່ອງ ແນໃສ່ ເພີ່ມທະວີການຜະລິດສິນຄ້າ, ການຄ້າ ແລະ ການບໍລິການ, ປະກອບສ່ວນເຂົ້າໃນການສ້າງວຽກເຮັດງານທຳ ແລະ ຍົກສູງຊີວິດການເປັນຢູ່ ຂອງປະຊາຊົນ, ສ້າງປະຖົມປັດໃຈໃຫ້ແກ່ການຫັນເປັນອຸດສາຫະກຳ ແລະ ທັນສະໄໝເທື່ອລະກ້າວ ແລະ ເຮັດໃຫ້ເສດຖະກິດແຫ່ງຊາດ ມີການຂະຫຍາຍຕົວຢ່າງຕໍ່ເນື່ອງ.

**ມາດຕາ 2 : ນິຍາມກ່ຽວກັບວິສາຫະກິດຂະໜາດນ້ອຍ ແລະ ກາງ**

ວິສາຫະກິດຂະໜາດນ້ອຍ ແລະ ກາງ ຊຶ່ງຂຽນຫຍໍ້ວ່າ " ວ ນ ກ " ແມ່ນ ບັນດາຫົວໜ່ວຍວິສາຫະກິດ ທີ່ເປັນເອກະລາດ ຊຶ່ງໄດ້ຈົດທະບຽນ ແລະ ເຄື່ອນໄຫວ ຖືກຕ້ອງຕາມກົດໝາຍຂອງ ສປປ ລາວ, ໂດຍຈັດແບ່ງຂະໜາດ ຕາມມາດຕະຖານເງື່ອນໄຂລຸ່ມນີ້:

- ວິສາຫະກິດຂະໜາດນ້ອຍ ແມ່ນບັນດາຫົວໜ່ວຍວິສາຫະກິດທີ່ມີຈຳນວນແຮງງານສະເລ່ຍແຕ່ລະປີ ບໍ່ເກີນ 19 ຄົນ ຫລື ມີມູນຄ່າຊັບສິນທັງໝົດບໍ່ເກີນ ສອງຮ້ອຍຫ້າສິບລ້ານກີບ ຫຼື ມີຍອດລາຍຮັບທຸລະກິດຕໍ່ປີ ບໍ່ເກີນ ສີ່ຮ້ອຍລ້ານກີບ;

- ວິສາຫະກິດຂະໜາດກາງ ແມ່ນບັນດາວິສາຫະກິດ ທີ່ມີຈຳນວນແຮງງານ ສະເລ່ຍແຕ່ລະປີ ບໍ່ເກີນ 99 ຄົນ ຫລື ມີມູນຄ່າຊັບສິນທັງໝົດບໍ່ເກີນ ໜຶ່ງພັນສອງຮ້ອຍລ້ານກີບ ຫຼື ມີຍອດລາຍຮັບທຸລະກິດຕໍ່ປີ ບໍ່ເກີນ ໜຶ່ງພັນລ້ານກີບ.

ການຈັດແບ່ງຂະໜາດ ວນກ ແມ່ນ ເພື່ອເປັນບ່ອນອີງ ໃນການດຳເນີນມາດຕະການຊຸກຍູ້ ສົ່ງເສີມ ວ ນ ກ ໃຫ້ສອດຄ່ອງກັບສະພາບຕົວຈິງ ຂອງການພັດທະນາ ເສດຖະກິດ-ສັງຄົມ ໃນແຕ່ລະໄລຍະ.

ໃຫ້ຫ້ອງການພັດທະນາ ວ ນ ກ ຂັ້ນສູນກາງ ໂດຍປະສານສົມທົບ ກັບພາກສ່ວນທີ່ກ່ຽວຂ້ອງ ອອກຂໍ້ກຳນົດ ໃນການຈັດແບ່ງຂະໜາດ ວ ນ ກ ເປັນແຕ່ລະໄລຍະ ຕາມຄວາມເໝາະສົມ.

### ມາດຕາ 3: ປະເພດຂອງວິສາຫະກິດຂະໜາດນ້ອຍ ແລະ ກາງ

ວິສາຫະກິດຂະໜາດນ້ອຍ ແລະ ກາງ ປະກອບມີ 3 ປະເພດຄື:

1. ວິສາຫະກິດຂະໜາດນ້ອຍ ແລະ ກາງ ທີ່ເຮັດການຜະລິດສິນຄ້າ,
2. ວິສາຫະກິດຂະໜາດນ້ອຍ ແລະ ກາງ ທີ່ເຮັດການຄ້າຂາຍ ແລະ
3. ວິສາຫະກິດຂະໜາດນ້ອຍ ແລະ ກາງ ທີ່ເຮັດການບໍລິການ

### ມາດຕາ 4: ຂອບເຂດການນຳໃຊ້ດຳລັດ

ດຳລັດສະບັບນີ້ ນຳໃຊ້ສຳລັບທຸກຫົວໜ່ວຍວິສາຫະກິດຂະໜາດນ້ອຍ ແລະ ກາງ ທີ່ສ້າງຕັ້ງ ແລະ ດຳເນີນທຸລະກິດໃນ ສປປ ລາວ ຕາມປະເພດ ແລະ ຂະໜາດ ທີ່ໄດ້ກຳນົດໄວ້ໃນມາດຕາ 2 ແລະ 3 ຂອງດຳລັດສະບັບນີ້, ໂດຍສະເພາະໃນການສະໜັບສະໜູນການສ້າງຕັ້ງ, ການປັບປຸງ ແລະ ການຂະຫຍາຍ ວິສາຫະກິດເຫລົ່ານັ້ນ.

## ໝວດທີ II
## ບັນດາທິດທາງ ຫລື ນະໂຍບາຍ ໃນການສົ່ງເສີມ ແລະ ພັດທະນາ ວ ນ ກ

### ມາດຕາ 5: ການສ້າງສະພາບແວດລ້ອມດ້ານລະບຽບການ ແລະ ການຄຸ້ມຄອງທີ່ເອື້ອອຳນວຍ

ໃຫ້ຫ້ອງການສົ່ງເສີມ ແລະ ພັດທະນາ ວນກ ຂັ້ນສູນກາງປະສານກັບຂະແໜງການ ແລະພາກສ່ວນທີ່ກ່ຽວຂ້ອງ ປັບປຸງລະບຽບການທີ່ມີຢູ່ ໂດຍການທົບທວນ ບາງລະບຽບການ ແລະ ວິທີການຈັດຕັ້ງປະຕິບັດ ທີ່ບໍ່ອຳນວຍໃຫ້ແກ່ການກໍ່ຕັ້ງ ແລະ ການຂະຫຍາຍ ທຸລະກິດ.

ສ້າງລະບຽບການໃໝ່ ໂດຍມີການປະສານສົມທົບລະຫວ່າງຂະແໜງການ ແລະ ພາກສ່ວນກ່ຽວຂ້ອງ, ມີສ່ວນຮ່ວມຂອງຜູ້ຈັດຕັ້ງປະຕິບັດ ເພື່ອຮັບປະກັນໃຫ້ມີເນື້ອໃນທີ່ສອດຄ່ອງ, ກະທັດຮັດ, ຈະແຈ້ງ ແລະ ມີຜົນສັກສິດໃນການຈັດຕັ້ງປະຕິບັດ.

ປັບປຸງລະບົບການສະໜອງ ແລະ ເຜີຍແຜ່ ຂໍ້ມູນຂ່າວສານ ກ່ຽວກັບລະບຽບການທີ່ກ່ຽວຂ້ອງກັບ ວ ນ ກ ໃຫ້ພຽງພໍ ແລະ ທັນສະພາບການ.

**ມາດຕາ 6: ການຍົກລະດັບຄວາມສາມາດໃນການແຂ່ງຂັນ**

ລັດໃຫ້ການສົ່ງເສີມ ເພື່ອພັດທະນາຄວາມສາມາດ ໃນການແຂ່ງຂັນຂອງ ວນກ ໂດຍຜ່ານການກໍ່ສ້າງ, ບຳລຸງຜູ້ປະກອບກິດຈະການ ແລະ ສີມືແຮງງານ ໃນຂົງເຂດ ວ ນ ກ ເພື່ອເພີ່ມຜະລິດຕະພາບ ຂອງການຜະລິດ ແລະ ການ ບໍລິການ ໂດຍຜ່ານໂຄງການສົ່ງເສີມ ດ້ານວິຊາການ, ການຍົກລະດັບ ຄຸນນະພາບ, ເຕັກໂນໂລຊີ ແລະ ຍົກລະດັບ ຄວາມສາມາດຄຸ້ມຄອງບໍລິຫານ ຂອງຜູ້ປະກອບ ກິດຈະການ. ລັດໃຫ້ການສະໜັບສະໜູນ ແລະ ຮ່ວມມືຢ່າງໃກ້ຊິດ ກັບບັນດາອົງການຈັດຕັ້ງຕ່າງໆ, ສະຖາບັນການສຶກສາ, ສະຖາບັນຄົ້ນຄວ້າ, ສະຖາບັນເຕັກນິກວິຊາການຕ່າງໆ ໃນການຈັດຕັ້ງປະຕິບັດ ບັນດາໂຄງການພັດທະນາຜູ້ປະກອບກິດຈະການ ແລະ ສີມືແຮງງານ.

**ມາດຕາ 7 : ການຂະຫຍາຍຕະຫລາດພາຍໃນ ແລະ ຕ່າງປະເທດ**

ກະຊວງການຄ້າເປັນຜູ້ສະໜອງຂໍ້ມູນຂ່າວສານ ດ້ານການຕະຫຼາດ ຫຼື ການຊ່ວຍເຫຼືອໃນການສຶກສາຕະຫຼາດ, ດຳເນີນກິດຈະກຳ ສົ່ງເສີມສິນຄ້າລາວ ແລະ ເຂົ້າຮ່ວມການວາງສະແດງ ສິນຄ້າຢູ່ພາຍໃນ ແລະ ຕ່າງປະເທດ ແລະ ສ້າງເງື່ອນໄຂໃຫ້ ວ ນ ກ ມີໂອກາດເປັນຜູ້ສະໜອງການຈັດຊື້ ທີ່ນຳໃຊ້ງົບປະມານ ຂອງລັດ ແລະ ອື່ນໆ.

**ມາດຕາ 8 : ການປັບປຸງການເຂົ້າຫາແຫລ່ງທຶນ**

ໃຫ້ກະຊວງການເງິນ ແລະ ທະນາຄານແຫ່ງ ສ ປ ປ ລາວ ເປັນຜູ້ສະໜອງເງິນງົບປະມານ ແລະ ເງິນກູ້ຢືມໃຫ້ມີຄວາມຄ່ອງຕົວ ແລະ ຄົບຊຸດ, ນຳໃຊ້ລະບົບການຄ້ຳປະກັນສິນເຊື່ອ ຫຼື ສ້າງທະນາຄານສົ່ງເສີມ ວ ນ ກ ສະເພາະ ເພື່ອຮັບປະກັນໃຫ້ແກ່ການຕອບສະໜອງ ດ້ານສິນເຊື່ອແກ່ວິສາຫະກິດຂະໜາດນ້ອຍ ແລະ ກາງ ໃຫ້ດຳເນີນທຸລະກິດໄປຕາມແຜນການທີ່ໄດ້ກຳນົດໄວ້.

**ມາດຕາ 9 : ການຊຸກຍູ້ ແລະ ສ້າງເງື່ອນໄຂທີ່ເອື້ອອຳນວຍ ໃຫ້ແກ່ການສ້າງຕັ້ງ ບັນດາອົງການຈັດຕັ້ງທາງທຸລະກິດ.**

ໃຫ້ຫ້ອງການສົ່ງເສີມ ແລະ ພັດທະນາ ວນກ ຂັ້ນສູນກາງຄົ້ນຄວ້າ ແລະ ສ້າງລະບຽບການເພື່ອອຳນວຍ ໃຫ້ແກ່ການສ້າງຕັ້ງບັນດາອົງການຈັດຕັ້ງທາງທຸລະກິດ, ອອກລະບຽບການທີ່ອຳນວຍ ແລະ ສົ່ງເສີມການສ້າງຕັ້ງກຸ່ມ, ສະມາຄົມ, ສະຫະກອນ ແລະ ສະໂມສອນທຸລະກິດ, ໃຫ້ການຊ່ວຍເຫລືອສ້າງຄວາມເຂັ້ມແຂງ ຂອງບັນດາການຈັດຕັ້ງເຫລົ່ານັ້ນ.

**ມາດຕາ 10 : ການເສີມຂະຫຍາຍທັດສະນະຄະຕິ ແລະຄຸນລັກສະນະຂອງນັກປະກອບກິດຈະການໃນສັງ ຄົມ**

ໃຫ້ກະຊວງສຶກສາ ສົມທົບກັບຫ້ອງການສົ່ງເສີມ ແລະ ພັດທະນາ ວນກ ຂັ້ນສູນກາງ ສ້າງຕຳລາການສິດສອນ ກ່ຽວກັບການເສີມສ້າງ ນັກປະກອບກິດຈະການ ແລະ ເອົາເຂົ້າໃນຫລັກສູດ ຂອງລະບົບການສຶກສາ, ສົ່ງເສີມບົດບາດ ແລະ ຄຸນລັກສະນະ ຂອງນັກປະກອບກິດຈະການ ໃນສັງຄົມໂດຍລວມ.

## ໝວດທີ III

## ກອງທຶນສົ່ງເສີມ ແລະ ພັດທະນາ ວ ນ ກ

### ມາດຕາ 11: ການສ້າງຕັ້ງກອງທຶນສົ່ງເສີມ ແລະ ພັດທະນາ ວ ນ ກ

ລັດຖະບານອະນຸຍາດ ໃຫ້ສ້າງຕັ້ງກອງທຶນ ສົ່ງເສີມ ແລະ ພັດທະນາ ວ ນ ກ ເພື່ອສະໜັບສະໜູນໂຄງການສົ່ງເສີມ ແລະ ພັດທະນາ ວ ນ ກ. ກອງທຶນດັ່ງກ່າວແມ່ນມອບໃຫ້ຫ້ອງການສົ່ງເສີມ ແລະ ພັດທະນາ ວນ ກ ຂັ້ນສູນກາງ ເປັນຜູ້ຄຸ້ມຄອງ. ລະບຽບການຄຸ້ມຄອງ ກອງທຶນສົ່ງເສີມ ແລະ ພັດທະນາ ວ ນ ກ ຈະໄດ້ ກຳນົດຕ່າງຫາກ.

### ມາດຕາ 12 : ລາຍຮັບຂອງກອງທຶນສົ່ງເສີມ ແລະ ພັດທະນາ ວ ນ ກ

ກອງທຶນສົ່ງເສີມ ແລະ ພັດທະນາ ວ ນ ກ ໄດ້ມາຈາກແຫລ່ງຕ່າງໆ ດັ່ງລຸ່ມນີ້:

1. ງົບປະມານແຫ່ງລັດ
2. ການຊ່ວຍເຫຼືອລ້າ ຫຼື ການກູ້ຢືມຈາກຕ່າງປະເທດ.
3. ການບໍລິຈາກ ຫຼື ການປະກອບສ່ວນຂອງບຸກຄົນ ຫຼື ອົງການຈັດຕັ້ງດ້ວຍຄວາມສະໝັກໃຈ.
4. ການບໍລິການ, ເກັບຄ່າທຳນຽມຕ່າງໆ ແລະ ອື່ນໆ.

### ມາດຕາ 13 : ລາຍຈ່າຍຂອງກອງທຶນສົ່ງເສີມ ແລະ ພັດທະນາ ວ ນ ກ

ການນຳໃຊ້ກອງທຶນສົ່ງເສີມ ແລະ ພັດທະນາ ວ ນ ກ ແມ່ນເພື່ອເປົ້າໝາຍດັ່ງນີ້:

1. ສະໜັບສະໜູນບັນດາໂຄງການສົ່ງເສີມ ແລະ ພັດທະນາ ວນກ
2. ສະໜັບສະໜູນດ້ານສິນເຊື່ອແກ່ ວນກ
3. ຄ່າໃຊ້ຈ່າຍບໍລິຫານ ຂອງຄະນະກຳມະການສົ່ງເສີມ ແລະ ພັດທະນາ ວ ນ ກ .
4. ເງິນນະໂຍບາຍ ແລະ ຄ່າບຳເນັດ ຂອງພະນັກງານຫ້ອງການສົ່ງເສີມ ແລະ ພັດທະນາ ວ ນ ກ.
5. ບຳລຸງ ແລະ ກໍ່ສ້າງພະນັກງານຂອງຫ້ອງການສົ່ງເສີມ ແລະ ພັດທະນາ ວ ນ ກ ແລະ ພະນັກງານ, ກຳມະກອນ ຂອງພາກສ່ວນທຸລະກິດ.
6. ຄ່າບໍລິຫານຂອງຫ້ອງການສົ່ງເສີມ ແລະ ພັດທະນາ ວ ນ ກ
7. ວຽກງານອື່ນໆ ທີ່ກ່ຽວກັບການສົ່ງເສີມ ແລະ ພັດທະນາ ວນກ

### ມາດຕາ 14 : ແຜນການລາຍຮັບ-ລາຍຈ່າຍຂອງກອງທຶນສົ່ງເສີມ ແລະ ພັດທະນາ ວ ນ ກ ປະຈຳປີ

ຄະນະກຳມະການສົ່ງເສີມ ແລະ ພັດທະນາ ວ ນ ກ ເປັນຜູ້ພິຈາລະນາຕົກລົງແຜນການລາຍຮັບ-ລາຍຈ່າຍ ປະຈຳປີ ແລ້ວສະເໜີໃຫ້ລັດຖະບານເປັນຜູ້ຕົກລົງຮັບຮອງເອົາ.

## ໝວດທີ IV
## ແຜນປະຕິບັດງານຂອງການ ສົ່ງເສີມ ແລະ ພັດທະນາ ວ ນ ກ.

### ມາດຕາ 15: ວິທີການຈັດຕັ້ງປະຕິບັດແຜນປະຕິບັດງານສົ່ງເສີມ ແລະ ພັດທະນາ ວ ນ ກ

ທຸກວິທີການໃນການສົ່ງເສີມ ແລະ ພັດທະນາ ວນກ ຈະຕ້ອງໄດ້ຮັບການວາງແຜນ ແລະ ຈັດຕັ້ງປະຕິບັດ ໃນຮູບແບບ ຂອງ ໂຄງການ ຫລື ແຜນງານ ທີ່ສອດຄ່ອງກັບແຜນພັດທະນາເສດຖະກິດ-ສັງຄົມ ແລະ ລະບຽບ ກົດໝາຍ ຂອງລັດ.

ຫ້ອງການສົ່ງເສີມ ແລະ ພັດທະນາ ວ ນ ກ ຂັ້ນສູນກາງ ເປັນຜູ້ກຳນົດ ບັນດາມາດຕະຖານ ແລະ ວິທີການໃນການສ້າງໂຄງການ ແລະແຜນງານ, ການຕິດຕາມ ແລະ ການປະເມີນຜົນໃນການຈັດຕັ້ງປະຕິບັດ.

ແຜນປະຕິບັດງານ ຂອງການສົ່ງເສີມ ແລະ ພັດທະນາ ວນກ ແມ່ນຫ້ອງການສົ່ງເສີມ ແລະ ພັດທະນາ ວ ນ ກ ຂັ້ນສູນກາງເປັນຜູ້ສ້າງຂຶ້ນ, ຄັດເລືອກ ແລະ ສັງລວມ ແລ້ວສະເໜີໃຫ້ຄະນະກຳມະການສົ່ງເສີມແລະ ພັດທະນາ ວນກ ຂັ້ນສູນກາງ ພິຈາລະນາ ແລະ ຮັບຮອງ ດ້ານຫລັກການກ່ອນແລ້ວຈຶ່ງນຳສະເໜີລັດຖະບານ.

### ມາດຕາ 16: ເນື້ອໃນຂອງແຜນປະຕິບັດງານ.

ເນື້ອໃນຂອງແຜນປະຕິບັດງານຈະຕ້ອງກ່ຽວພັນກັບໂຄງການ ແລະ ວຽກງານທີ່ໃຫ້ການສະໜັບສະໜູນ ວນກ ດ້ານໃດໜຶ່ງ ດັ່ງນີ້:

1. ການສົ່ງເສີມ ແລະ ພັດທະນາ ວນກ ແຕ່ລະປະເພດ ດ້ວຍການຄຳນຶງເຖິງການນຳໃຊ້ ຊັບພະຍາກອນ ໃນທ້ອງຖິ່ນທີ່ເໝາະສົມ,
2. ການສະໜັບສະໜູນ ດ້ານການເງິນ,
3. ການສະໜັບສະໜູນ ດ້ານວິຊາການ,
4. ການພັດທະນາຄວາມຮູ້ ຄວາມສາມາດ ຂອງຜູ້ປະກອບການ ວນກ ແລະ ບຸກຄະລາກອນໃນດ້ານການບໍລິຫານ ການຕະຫຼາດ, ການເງິນ, ການຜະລິດ, ບຸກຄະລາກອນ ແລະ ການພັດທະນາ ນັບທັງການ ຈັດການໃນດ້ານຕ່າງໆ,
5. ສົ່ງເສີມການປັບປຸງຄຸນນະພາບການຜະລິດສິນຄ້າ, ການຄ້າ ແລະ ການບໍລິການ,
6. ສົ່ງເສີມການພົວພັນການຕະຫຼາດທັງພາຍໃນ ແລະ ຕ່າງປະເທດ,
7. ການສະໜອງດ້ານຂໍ້ມູນຂ່າວສານ,
8. ການສົ່ງເສີມວຽກງານວິໄຈ ແລະ ພັດທະນາ ລວມທັງການຖ່າຍທອດເຕັກໂນໂລຊີ ທີ່ທັນສະໄໝ ແລະ ເໝາະສົມ ເຂົ້າໃນ ວນກ,
9. ການສົ່ງເສີມການພົວພັນ ແລະ ສະໜັບສະໜູນ ລະຫວ່າງວິສາຫະກິດຂະໜາດນ້ອຍ ແລະ ກາງ ກັບວິສາຫະກິດຂະໜາດໃຫຍ່,
10. ການສົ່ງເສີມ ການຮວມກຸ່ມ ລະຫວ່າງ ວິສາຫະກິດຂະໜາດນ້ອຍ ແລະ ກາງ ເພື່ອຊ່ວຍເຫລືອຊຶ່ງ ກັນ ແລະ ກັນ,
11. ການສົ່ງເສີມ ແລະ ພັດທະນາອົງການຈັດຕັ້ງຕ່າງໆທີ່ມີບົດບາດໃນການສົ່ງເສີມພັດທະນາ ວນກ,
12. ການສົ່ງເສີມ ແລະ ອຳນວຍຄວາມສະດວກ ໃຫ້ແກ່ການລົງທຶນ ເຂົ້າໃນການສ້າງຕັ້ງ ແລະ ດຳເນີນທຸລະກິດ ຂອງ ວ ນ ກ,

13. ການໃຫ້ສິດທິ, ຜົນປະໂຫຍດ ແລະ ແນະນຳການປະຕິບັດພັນທະຂອງ ວ ນ ກ,
14. ການສົ່ງເສີມ ແລະ ການແນະນຳ, ການນຳໃຊ້ແຮງງານ, ການຮັກສາສຸຂະພາບ, ອານາໄມ ແລະ ການປົກປັກຮັກສາ ສິ່ງແວດລ້ອມ,
15. ການສົ່ງເສີມສະໜັບສະໜູນດ້ານລິຂະສິດ,ສິດທິບັດ,ເຄື່ອງໝາຍການຄ້າ ແລະ ຊັບສິນທາງປັນຍາ,
16. ການປັບປຸງ ຫລື ແກ້ໄຂລະບຽບການ, ຂັ້ນຕອນ ແລະ ວິທີການປະຕິບັດທີ່ເປັນອຸປະສັກ ຕໍ່ ວນກ,
17. ການສົ່ງເສີມສ້າງຕັ້ງ ພັດທະນາ ວ ນ ກ ຂຶ້ນໃໝ່,
18. ສົ່ງເສີມການຖືບັນຊີ ຂອງ ວ ນ ກ,
19. ການແນະນຳ ລະບຽບການ ແລະ ວິທີການເຄື່ອນໄຫວອື່ນໆ ຕາມກົດໝາຍຂອງ ສ ປ ປ ລາວ,
20. ແລະ ວຽກງານອື່ນໆ ທີ່ກ່ຽວຂ້ອງກັບການສົ່ງເສີມ ແລະ ພັດທະນາ ວນກ ໃຫ້ມີການຂະຫຍາຍຕົວ ແລະ ເພີ່ມຄວາມສາມາດ ໃນການແຂ່ງຂັນ.

## ໝວດທີ V
## ລະບົບການຈັດຕັ້ງ ແລະ ພາລະບົດບາດ
## ຂອງບັນດາອົງການຈັດຕັ້ງ ສົ່ງເສີມ ແລະ ພັດທະນາວິສາຫະກິດຂະໜາດນ້ອຍ ແລະ ກາງ

**ມາດຕາ 17: ບັນດາອົງການຈັດຕັ້ງສົ່ງເສີມ ແລະ ພັດທະນາ ວນກ ຂັ້ນສູນກາງ.**

ບັນດາອົງການຈັດຕັ້ງສົ່ງເສີມ ແລະ ພັດທະນາ ວນກ ຂັ້ນສູນກາງ ປະກອບດ້ວຍ:

- ຄະນະກຳມະການສົ່ງເສີມ ແລະ ພັດທະນາ ວິສາຫະກິດຂະໜາດນ້ອຍ ແລະ ກາງ
- ຄະນະກຳມະການປະຈຳຫ້ອງການສົ່ງເສີມ ແລະ ພັດທະນາ ວິສາຫະກິດຂະໜາດນ້ອຍ ແລະ ກາງ
- ຫ້ອງການສົ່ງເສີມ ແລະ ພັດທະນາວິສາຫະກິດຂະໜາດນ້ອຍ ແລະ ກາງ

**ມາດຕາ 18: ຄະນະກຳມະການສົ່ງເສີມ ແລະ ພັດທະນາວິສາຫະກິດຂະໜາດນ້ອຍ ແລະ ກາງ**

ສ້າງຕັ້ງຄະນະກຳມະການສົ່ງເສີມ ແລະ ພັດທະນາ ວນກ ທີ່ບໍ່ປະຈຳການ ໃນຂັ້ນສູນກາງ ດ້ວຍຮູບການ ການຮ່ວມມື ລະຫວ່າງ ພາກລັດ ແລະ ທຸລະກິດ.

ຄະນະກຳມະການສົ່ງເສີມ ແລະ ພັດທະນາ ວ ນ ກ ເຄື່ອນໄຫວວຽກງານ ໃນຮູບແບບກອງປະຊຸມ ແລະ ມີໜ້າທີ່ໃຫ້ຄຳປຶກສາໂດຍກົງ ແກ່ລັດຖະບານ ກ່ຽວກັບນະໂຍບາຍ ແລະ ບັນດາໂຄງການສົ່ງເສີມ ແລະ ພັດທະນາ ວ ນ ກ

**ມາດຕາ 19 : ສະມາຊິກຄະນະກຳມະການສົ່ງເສີມ ແລະ ພັດທະນາ ວ ນ ກ.**

ສະມາຊິກຄະນະກຳມະການສົ່ງເສີມ ແລະ ພັດທະນາ ວ ນ ກ ປະກອບດ້ວຍ :

1. ລັດຖະມົນຕີ ວ່າການກະຊວງອຸດສາຫະກຳ ແລະ ຫັດຖະກຳ ເປັນປະທານ;
2. ລັດຖະມົນຕີ ຊ່ວຍວ່າການ ກະຊວງການເງິນ ເປັນຮອງປະທານ;
3. ລັດຖະມົນຕີ ຊ່ວຍວ່າການ ກະຊວງຄົມມະນາຄົມ ຂົນສົ່ງ ໄປສະນີ ແລະ ກໍ່ສ້າງ ເປັນກຳມະການ;
4. ລັດຖະມົນຕີ ຊ່ວຍວ່າການ ກະຊວງການຄ້າ ເປັນກຳມະການ;
5. ລັດຖະມົນຕີ ຊ່ວຍວ່າການ ກະຊວງກະສິກຳ-ປ່າໄມ້ ເປັນກຳມະການ;
6. ຮອງປະທານທະນາຄານ ແຫ່ງ ສປປ ລາວ ເປັນກຳມະການ;

7. ຮອງປະທານສະຫະພັນແມ່ຍິງລາວ ເປັນກຳມະການ
8. ອະທິການບໍດີ ມະຫາວິທະຍາໄລແຫ່ງຊາດ ເປັນກຳມະການ;
9. ປະທານອົງການທ່ອງທ່ຽວແຫ່ງຊາດ ເປັນກຳມະການ;
10. ປະທານສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດ ເປັນກຳມະການ;
11. ຫົວໜ້າຫ້ອງການສົ່ງເສີມ ວນກ ເປັນກຳມະການ ແລະ ເລຂານຸການ;
12. ບັນດານັກທຸລະກິດ ແລະ ຜູ້ຊົງຄຸນວຸດທີບໍ່ເກີນ 15 ຄົນເປັນກຳມະການ, ຊຶ່ງຖືກແຕ່ງຕັ້ງໂດຍ ນາຍົກລັດຖະມົນຕີ ຕາມການສະເໜີຂອງປະທານຄະນະກຳມະການສົ່ງເສີມ ແລະ ພັດທະນາ ວ ນ ກ.

## ມາດຕາ 20: ມາດຕະຖານ ແລະ ເງື່ອນໄຂ ຂອງຄະນະກຳມະການສົ່ງເສີມ ແລະ ພັດທະນາ ວນກ ທີ່ເປັນນັກທຸລະກິດ ແລະ ຜູ້ຊົງຄຸນວຸດທິ.

ນັກທຸລະກິດ ແລະ ຜູ້ຊົງຄຸນວຸດທິ ທີ່ຈະເປັນຄະນະກຳມະການຕ້ອງມີຄວາມຮູ້, ຄວາມສາມາດ, ມີຄວາມຊ່ຽວຊານດ້ານ ທຸລະກິດ ແລະ ມີປະສົບການຢ່າງໜ້ອຍ ຫ້າປີຂຶ້ນໄປ ແລະ ດຳເນີນທຸລະກິດກ່ຽວກັບ ວ ນ ກ ໂດຍຖືກຄັດເລືອກ ຈາກຕົວແທນຂອງພາກເອກະຊົນ ທີ່ດຳເນີນທຸລະກິດ ໃນວິສາຫະກິດຂະໜາດນ້ອຍ ແລະ ກາງ.

ນອກຈາກມາດຕະຖານຂັ້ນເທິງນີ້ແລ້ວ ຕ້ອງມີມາດຕະຖານ ແລະ ເງື່ອນໄຂ ດັ່ງລຸ່ມນີ້:

1. ຕ້ອງແມ່ນຄົນສັນຊາດລາວ.
2. ບໍ່ເປັນບຸກຄົນຖືກລົ້ມລະລາຍ.
3. ບໍ່ເປັນບຸກຄົນທີ່ຂາດຄວາມສາມາດທາງ ດ້ານການປະພຶດ
4. ບໍ່ເຄີຍຖືກຕ້ອງໂທດ, ເວັ້ນເສຍແຕ່ເປັນໂທດ ກ່ຽວກັບການກະທຳຜິດ ໃນກໍລະນີປະໝາດເລັ່ນເລີ້ ຫຼື ດ້ວຍ ການບໍ່ລະມັດລະວັງ.

## ມາດຕາ 21: ອາຍຸການຂອງຄະນະກຳມະການສົ່ງເສີມ ແລະ ພັດທະນາ ວ ນ ກ ທີ່ມາຈາກນັກທຸລະກິດ ແລະ ຜູ້ຊົງຄຸນວຸດທິ

ອາຍຸການຂອງຄະນະກຳມະການ ທີ່ມາຈາກນັກທຸລະກິດ ແລະ ຜູ້ຊົງຄຸນວຸດທິ ແມ່ນ 3 ປີ ( ໜຶ່ງສະໄໝ) ນັບແຕ່ມື້ ຖືກແຕ່ງຕັ້ງເປັນຕົ້ນໄປ ແລະ ສາມາດຄັດເລືອກໃໝ່ໄດ້ຫລາຍສະໄໝ.

ຄະນະກຳມະການນັກທຸລະກິດ ຫຼື ຜູ້ຊົງຄຸນວຸດທິ ອາດພົ້ນຕຳແໜ່ງຕາມກໍລະນີດັ່ງນີ້:

1. ເສຍຊີວິດ,
2. ລາອອກ,
3. ມີມະຕິຂອງຄະນະລັດຖະບານໃຫ້ອອກ,
4. ຂາດຄຸນສົມບັດ ແລະ ອື່ນໆ.

ໃນກໍລະນີທີ່ກຳມະການນັກທຸລະກິດ ຫຼື ຜູ້ຊົງຄຸນວຸດທິ ຫາກພົ້ນຈາກຕຳແໜ່ງ ກ່ອນຄົບອາຍຸການ ຈະດ້ວຍເຫດຜົນໃດກໍ່ຕາມ ໂດຍທີ່ໃຫ້ມີການແຕ່ງຕັ້ງນັກທຸລະກິດ ຫຼື ຜູ້ຊົງຄຸນວຸດທິໃໝ່ເຂົ້າມາແທນ, ໃຫ້ຜູ້ໄດ້ຮັບການແຕ່ງຕັ້ງໃໝ່ນີ້ ດຳລົງຕຳແໜ່ງແທນ ຕາມອາຍຸການທີ່ຍັງເຫຼືອຢູ່ ຂອງກຳມະການທີ່ພົ້ນຈາກຕຳແໜ່ງກ່ອນນັ້ນ.

**ມາດຕາ 22: ກອງປະຊຸມຂອງຄະນະກຳມະການສົ່ງເສີມ ແລະ ພັດທະນາ ວ ນ ກ**

ກອງປະຊຸມຂອງຄະນະກຳມະການສົ່ງເສີມ ແລະ ພັດທະນາ ວ ນ ກ ຢ່າງໜ້ອຍຕ້ອງມີສະມາຊິກ 2/3 ຂຶ້ນໄປ. ກອງປະຊຸມສາມັນຕ້ອງຈັດຂຶ້ນທຸກໆ 6 ເດືອນ. ໃນກໍລະນີມີວຽກສຳຄັນຮີບດ່ວນສາມາດຈັດກອງ ປະຊຸມວິສາມັນຂຶ້ນໄດ້ທຸກເວລາ.

**ມາດຕາ 23 : ຄະນະກຳມະການປະຈຳຫ້ອງການສົ່ງເສີມ ແລະ ພັດທະນາ ວ ນ ກ**

ສະມາຊິກຂອງຄະນະກຳມະການສົ່ງເສີມ ແລະ ພັດທະນາ ວ ນ ກ ຈຳນວນບໍ່ເກີນ 9 ທ່ານ ຈະໄດ້ຮັບການແຕ່ງຕັ້ງໃຫ້ເປັນ ຄະນະກຳມະການປະຈຳຫ້ອງການສົ່ງເສີມ ແລະ ພັດທະນາ ວ ນ ກ ເພື່ອເຮັດໜ້າທີ່ ໃນການຄຸ້ມຄອງຫ້ອງການສົ່ງເສີມ ແລະ ພັດທະນາ ວ ນ ກ.

ປະທານຄະນະກຳມະການສົ່ງເສີມ ແລະ ພັດທະນາ ວ ນ ກ ເປັນຜູ້ກຳນົດ ກ່ຽວກັບພາລະບົດບາດ ແລະ ອົງປະກອບສະມາຊິກ ຄະນະກຳມະການປະຈຳຫ້ອງການສົ່ງເສີມ ແລະ ພັດທະນາ ວ ນ ກ .

**ມາດຕາ 24: ຫ້ອງການສົ່ງເສີມ ແລະ ພັດທະນາ ວ ນ ກ ຂັ້ນສູນກາງ**

ໃນເບື້ອງຕົ້ນນີ້, ໃຫ້ສ້າງຕັ້ງຫ້ອງການສົ່ງເສີມ ແລະ ພັດທະນາ ວ ນ ກ ຂັ້ນສູນກາງ ເປັນຫ້ອງການດ້ານວິຊາການ ທຽບເທົ່າກົມ, ຢູ່ພາຍໃຕ້ການດູແລ ຂອງກະຊວງອຸດສາຫະກຳ ແລະ ຫັດຖະກຳ, ເຮັດໜ້າທີ່ປະສານວຽກງານ ສະໜັບສະໜູນ ການສົ່ງເສີມ ແລະ ພັດທະນາ ວ ນ ກ.

ຫ້ອງການສົ່ງເສີມ ແລະ ພັດທະນາ ວ ນ ກ ຂັ້ນສູນກາງ ປະກອບດ້ວຍ ຫົວໜ້າຫ້ອງການ ຊຶ່ງຖືກແຕ່ງຕັ້ງ ແລະ ປົດຕຳແໜ່ງ ໂດຍນາຍົກລັດຖະມົນຕີ ຕາມການສະເໜີ ຂອງປະທານຄະນະກຳມະການສົ່ງເສີມ ແລະ ພັດທະນາ ວ ນ ກ; ຮອງຫົວໜ້າ ແລະ ບັນດາວິຊາການແມ່ນຖືກແຕ່ງຕັ້ງ ແລະ ປົດຕຳແໜ່ງ ໂດຍ ປະທານຄະນະກຳມະການສົ່ງເສີມ ແລະ ພັດທະນາ ວ ນ ກ.

ຫ້ອງການສົ່ງເສີມ ແລະ ພັດທະນາ ວ ນ ກ ມີຖານະດ້ານການເງິນ ທີ່ເປັນເອກະລາດ, ມີກາປະທັບ ແລະ ບັນຊີທະນາຄານເປັນຂອງຕົນເອງ ແລະ ຄຸ້ມຄອງໂດຍຄະນະປະຈຳ ຫ້ອງການສົ່ງເສີມ ແລະ ພັດທະນາ ວ ນ ກ.

ຂໍ້ກຳນົດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງຫ້ອງການສົ່ງເສີມ ແລະ ພັດທະນາ ວ ນ ກ ຂັ້ນສູນ ກາງ ແມ່ນຄະນະກຳມະການສົ່ງເສີມ ແລະ ພັດທະນາ ວ ນ ກ ຂັ້ນສູນກາງ ເປັນຜູ້ກຳນົດ.

**ມາດຕາ 25: ສິດ ແລະ ໜ້າທີ່ຂອງຫ້ອງການສົ່ງເສີມ ແລະ ພັດທະນາ ວ ນ ກ ຂັ້ນສູນກາງ**

1. ເປັນກອງເລຂາ ໃຫ້ຄະນະກຳມະການສົ່ງເສີມ ແລະ ພັດທະນາ ວ ນ ກ ໃນການຄົ້ນຄວ້ານະໂຍບາຍ ແລະ ແຜນການສົ່ງເສີມ ແລະ ພັດທະນາ ວ ນ ກ ແລະ ອຳນວຍຄວາມສະດວກ ໃຫ້ແກ່ການເຄື່ອນໄຫວຂອງຄະນະກຳມະການສົ່ງເສີມ ແລະ ພັດທະນາ ວ ນ ກ.
2. ກຳນົດປະເພດ ແລະ ຂະໜາດ ວ ນ ກ ໃຫ້ສອດຄ່ອງກັບສະພາບເສດຖະກິດສັງ-ຄົມ ຂອງແຕ່ລະທ້ອງຖິ່ນ.
3. ບໍລິຫານກອງທຶນສົ່ງເສີມ ວ ນ ກ ຕາມນະໂຍບາຍ ແລະ ຕາມມະຕິຕົກລົງຂອງຄະນະກຳມະການສົ່ງເສີມ ແລະ ພັດທະນາ ວ ນ ກ.

4. ຈັດຕັ້ງປະຕິບັດ, ຕິດຕາມ, ກວດກາ ແລະ ປະເມີນຜົນ ບັນດາໂຄງການສະໜັບສະໜູນສົ່ງເສີມ ແລະ ແຜນການພັດທະນາ ວ ນ ກ ປະຈຳປີ.
5. ລາຍງານທຸກໆ 3 ເດືອນ ກ່ຽວກັບການຈັດຕັ້ງປະຕິບັດ ໂຄງການສົ່ງເສີມ ແລະ ພັດທະນາ ວ ນ ກ ໃຫ້ແກ່ຄະນະກຳມະການສົ່ງເສີມ ແລະ ພັດທະນາ ວ ນ ກ ແລະ ສະເໜີອະນຸມັດແຜນການ 3 ເດືອນ ຕໍ່ໄປ.
6. ໂຄສະນາເຜີຍແຜ່ຂໍ້ມູນຂ່າວສານ ກ່ຽວກັບລະບຽບກົດໝາຍ, ບັນດາໂຄງການຊ່ວຍເຫລືອການ ສົ່ງເສີມ ແລະ ພັດທະນາ ວ ນ ກ, ແຜນການພັດທະນາ ເສດຖະກິດ-ສັງຄົມຂອງລັດຖະບານ ໃຫ້ແກ່ພາກສ່ວນ ວິສາຫະກິດຂະໜາດນ້ອຍ ແລະ ກາງ.
7. ຍົກລະດັບຄວາມຮູ້ ຄວາມສາມາດ ໃນດ້ານການສົ່ງເສີມ ແລະ ພັດທະນາ ວ ນ ກ ໃຫ້ແກ່ພະນັກງານຂອງລັດ ແລະ ພາກສ່ວນເອກະຊົນ.
8. ປະສານສົມທົບ ກັບພາກສ່ວນຕ່າງໆ ທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດໂຄງການສົ່ງເສີມ ແລະ ພັດທະນາ ວນກ.
9. ພົວພັນຮ່ວມມືກັບສາກົນ ກ່ຽວກັບການສົ່ງເສີມ ແລະ ພັດທະນາ ວ ນ ກ.
10. ໃຫ້ຄຳແນະນຳ ແກ່ຂະແໜງການທີ່ກ່ຽວຂ້ອງ, ລັດວິສາຫະກິດ ຫຼື ພາກສ່ວນເອກະຊົນທີ່ກ່ຽວຂ້ອງ ໃຫ້ປະຕິບັດຕາມແຜນການ ສົ່ງເສີມ ແລະ ພັດທະນາ ວ ນ ກ.
11. ປະຕິບັດສິດ ແລະ ໜ້າທີ່ອື່ນໆ ຕາມການມອບໝາຍຂອງຄະນະກຳມະການສົ່ງເສີມ ແລະ ພັດທະນາ ວ ນ ກ ແລະ ຕາມ ທີ່ກຳນົດ ໄວ້ໃນກົດໝາຍ.

## ມາດຕາ 26 : ອົງການຈັດຕັ້ງການສົ່ງເສີມ ແລະ ພັດທະນາ ວ ນ ກ ຂັ້ນທ້ອງຖິ່ນ

1. ລັດສົ່ງເສີມການສ້າງຕັ້ງ ອົງການຈັດຕັ້ງການສົ່ງເສີມ ແລະ ພັດທະນາ ວ ນ ກ ໃນລະດັບທ້ອງຖິ່ນ ໃນຮູບການ ການຮ່ວມມື ລະຫວ່າງພາກລັດ ແລະ ທຸລະກິດໃນຮູບແບບກຸ່ມການຜະລິດ-ທຸລະກິດ, ສະມາຄົມ, ສະຫະກອນ ແລະ ອື່ນໆ ຕາມເງື່ອນໄຂຕົວຈິງຂອງທ້ອງຖິ່ນ.
2. ໃຫ້ພະແນກອຸດສາຫະກຳ ແລະ ຫັດຖະກຳ ປະຈຳນະຄອນ, ແຂວງ ແລະ ເຂດພິເສດ ທີ່ມີຢູ່ແລ້ວ ເປັນຜູ້ເຮັດໜ້າທີ່ສົ່ງເສີມ ແລະ ພັດທະນາ ວນກ ຢູ່ທ້ອງຖິ່ນ ທັງເປັນຜູ້ປະສານງານກັບ ຫ້ອງການສົ່ງເສີມ ແລະ ພັດທະນາ ວນກ ຂັ້ນສູນກາງ ແລະ ກຸ່ມຜູ້ຜະລິດ, ສະມາຄົມ, ສະຫະກອນ ແລະ ອື່ນໆ ຂອງທ້ອງຖິ່ນ.
3. ຫ້ອງການສົ່ງເສີມ ແລະ ພັດທະນາ ວ ນ ກ ຂັ້ນສູນກາງ ຈະເປັນຜູ້ຄົ້ນຄວ້າ ແລະ ອອກລະບຽບການ ກ່ຽວກັບພາລະບົດບາດ, ສິດ ແລະ ໜ້າທີ່ ກ່ຽວກັບອົງການຈັດຕັ້ງສົ່ງເສີມ ແລະ ພັດທະນາ ວນກ ປະຈຳທ້ອງຖິ່ນ ນັບທັງ ສະມາຄົມ, ກຸ່ມຜູ້ຜະລິດ, ສະຫະກອນ ແລະ ອື່ນໆ ໃນການເຄື່ອນໄຫວວຽກງານ ແລະ ສົ່ງເສີມພັດທະນາ ວນກ ຢູ່ທ້ອງຖິ່ນ.

## ມາດຕາ 27 : ບົດບາດຂອງອຳນາດການປົກຄອງແຂວງ, ນະຄອນ ແລະ ເຂດພິເສດ

ອຳນາດການປົກຄອງແຂວງ, ນະຄອນຫຼວງ ແລະ ເຂດພິເສດ ມີໜ້າທີ່ຮັບຜິດຊອບ ໃນການນຳເອົາບັນດາ ນະໂຍບາຍການສົ່ງເສີມ ແລະ ພັດທະນາ ແລະ ມາດຕະການຕ່າງໆ ທີ່ກຳນົດໄວ້ໃນດຳລັດສະບັບນີ້ ເຂົ້າເປັນສ່ວນໜຶ່ງ ຂອງແຜນພັດທະນາເສດຖະກິດ-ສັງຄົມຂອງຕົນ ໂດຍອີງຕາມສະພາບເງື່ອນໄຂຕົວຈິງ ຂອງແຕ່ລະທ້ອງຖິ່ນ.

ອຳນາດການປົກຄອງແຂວງ, ນະຄອນ ແລະ ເຂດພິເສດມີໜ້າທີ່ໃຫ້ການຊ່ວຍເຫລືອ, ຮ່ວມມື ແລະ ປະສານສົມທົບກັບຫ້ອງການສົ່ງເສີມ ແລະ ພັດທະນາ ວ ນ ກ ຂັ້ນສູນກາງ, ອົງການຈັດຕັ້ງການສົ່ງເສີມ ແລະ ພັດທະນາ ວ ນ ກ ຢູ່ທ້ອງຖິ່ນໃນການສ້າງ ແລະ ຈັດຕັ້ງປະຕິບັດບັນດາໂຄງການສົ່ງເສີມ ແລະ ພັດທະນາ ວ ນ ກ ຢູ່ທ້ອງຖິ່ນໃນການສ້າງ ແລະ ຈັດຕັ້ງປະຕິບັດບັນດາໂຄງການສົ່ງເສີມ ແລະ ພັດທະນາ ວ ນ ກ ຢູ່ທ້ອງຖິ່ນຕາມເງື່ອນໄຂຕົວຈິງຂອງແຕ່ລະທ້ອງຖິ່ນ.

ບັນດາໂຄງການ ແລະ ແຜນງານສະໜັບສະໜູນການສົ່ງເສີມ ແລະ ພັດທະນາ ວ ນ ກ ທີ່ມີການນຳໃຊ້ຊັບພະຍາກອນ ຈາກງົບປະມານຂອງລັດ ທີ່ຖືກດຳເນີນຢູ່ທ້ອງຖິ່ນ ຈະຕ້ອງໄດ້ປະຕິບັດຕາມທິດທາງ ທີ່ກຳນົດໂດຍຫ້ອງການສົ່ງເສີມ ແລະ ພັດທະນາ ວ ນ ກ ຂັ້ນສູນກາງ.

ອຳນາດການປົກຄອງແຂວງ, ນະຄອນ ແລະ ເຂດພິເສດ ມີໜ້າທີ່ສ້າງບົດລາຍງານທຸກ 6 ເດືອນ ກ່ຽວກັບຜົນງານ, ຂໍ້ຫຍຸ້ງຍາກ ແລະ ຂໍ້ສະເໜີວິທີແກ້ໄຂໃນຂົງເຂດການສົ່ງເສີມ ແລະ ພັດທະນາ ວ ນ ກ ໃນທ້ອງຖິ່ນຂອງຕົນ ແລ້ວລາຍງານຕໍ່ລັດຖະກອນ ໂດຍຜ່ານຫ້ອງການສົ່ງເສີມ ແລະ ພັດທະນາ ວ ນ ກ ຂັ້ນສູນກາງ.

## ໝວດທີ VI
## ບົດບັນຍັດສຸດທ້າຍ

**ມາດຕາ 28: ການຈັດຕັ້ງປະຕິບັດ.**

ມອບໃຫ້ຄະນະກຳມະການສົ່ງເສີມ ແລະ ພັດທະນາ ວ ນ ກ, ບັນດາກະຊວງ, ອົງການທຽບເທົ່າ ກະຊວງ ແລະ ອຳນາດການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງຈັດຕັ້ງ ແລະ ຜັນຂະຫຍາຍດຳລັດສະບັບນີ້ ໃຫ້ປະກົດຜົນເປັນຈິງ ແລະ ເຂັ້ມງວດ.

**ມາດຕາ 29: ຜົນສັກສິດ.**

ດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

**ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ**

